ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ທະນາຄານແຫ່ງ ສປປ ລາວ
ຂາເຂົ້າ ເລກທີ: 4323
ວັນທີ: 10.9.2021
ໂທລະສັບ: 243710

ເລກທີ 1158 ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 09 ກັນຍາ 2021

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ.
- ທ່ານ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ທີ່ນັບຖື.
- ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ທີ່ນັບຖື. ✓
- ທ່ານ ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ທີ່ນັບຖື.

ເລື່ອງ: ທິດຊີ້ນຳ ກ່ຽວກັບຜົນການຄົ້ນຄວ້າ ການທົດລອງຂຸດບິດຄອຍ; ການຂໍເຊັນສັນຍາຊື້-ຂາຍພະລັງງານໄຟຟ້າ ກັບບໍລິສັດ ທີ່ໃຫ້ເງື່ອນໄຂດ້ານລາຄາໄຟຟ້າສູງສຸດ ເພື່ອນຳໃຊ້ເຂົ້າໃນຂະແໜງກິດຈະການ Data Processing ຫຼື ການຂຸດບໍ່ດິຈິຕອນ (Crypto Currency).

ສອນໄຊ ສິດພະໄຊ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ໜັງສືລາຍງານ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 1044/ພບ, ລົງວັນທີ 24 ສິງຫາ 2021 ແລະ ກະຊວງການເງິນ ສະບັບເລກທີ 4035/ກງ, ລົງວັນທີ 26 ສິງຫາ 2021.
- ອີງຕາມ ທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 09 ກັນຍາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: **"ເພື່ອໃຫ້ດຳເນີນການໄດ້ໄວ (ບໍ່ເສຍໂອກາດ) ຈຶ່ງໃຫ້ຈັດຕັ້ງປະຕິບັດ ດັ່ງນີ້: 1). ເຫັນດີອະນຸມັດໃຫ້ບໍລິສັດ ຈຳນວນໜຶ່ງເຮັດທົດລອງກ່ຽວກັບການຂຸດ, ການນຳໃຊ້, ການຊື້-ຂາຍເງິນຄຣິບໂຕ ຢູ່ ສປປ ລາວ ໃນນີ້ລວມທັງບໍລິສັດ ວາບປ໌ ດາຕາ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ ຢູ່ເມືອງຊຽງເງິນ ແຂວງຫຼວງພະບາງ ທີ່ໄດ້ດຳເນີນມາໄລຍະໜຶ່ງແລ້ວນັ້ນ ໃຫ້ເຂົ້າສູ່ຂະບວນການຄຸ້ມຄອງຂອງອົງການກ່ຽວຂ້ອງຂອງລັດຢ່າງເປັນທາງການ ພ້ອມທັງຮັບຮອງຕື່ມອີກ 05 ບໍລິສັດ ຄື: ❶ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ ຈຳກັດ, ❷ ບໍລິສັດ ສີສະເກດກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ, ❸ ບໍລິສັດ ບຸຜາ ພັດທະນາກໍ່ສ້າງເຄຫາສະຖານຂົວທາງ ແລະ ສຳຫຼວດອອກແບບ ຈຳກັດຜູ້ດຽວ, ❹ ທະນາຄານຮ່ວມພັດທະນາ ຈຳກັດ ແລະ ❺ ບໍລິສັດ ພູສີ ກຣຸບ ຈຳກັດຜູ້ດຽວ;**

**2). ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງສົມທົບກັບ ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງປ້ອງກັນຄວາມສະຫງົບ ແລະ ລັດວິສາຫະກິດໄຟຟ້າລາວ ຄົ້ນຄວ້າຮ່າງກົດລະບຽບການຄຸ້ມຄອງ ແລະ ມາດຖານເງື່ອນໄຂຕ່າງໆ ໃນການເຮັດທົດລອງ ສຳລັບການອະນຸຍາດໃຫ້ຂຸດຄົ້ນ ແລະ ຊື້-ຂາຍເງິນຄຣິບໂຕຢູ່ ສປປ ລາວ (ຄ້າຍຄືຮູບແບບຂອງການເຮັດທົດລອງແຮ່ຫຼັກ). ພ້ອມດຽວກັນນັ້ນ, ຂະແໜງການ ແລະ ອົງການທີ່ກ່ຽວຂ້ອງຂ້າງເທິງ ກໍ່ເປັນເຈົ້າການຄົ້ນຄວ້າ ແລະ ກຳນົດພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕົນ ເພື່ອນຳສະເໜີທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ພິຈາລະນາ;**

3). ສຳລັບ ບໍລິສັດ ວາບປ໌ ດາຕາ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ ແລະ 05 ບໍລິສັດ ທີ່ໄດ້ຮັບຮອງໃນການເຮັດທົດລອງນີ້ ຕ້ອງໄດ້ຕື່ນຕົວສະເໜີຕົນເອງເຂົ້າໃນລະບຽບການຄຸ້ມຄອງ ທັງສະເໜີຜົນປະໂຫຍດຕ່າງໆ ໃຫ້ລັດຖະບານ ບົນພື້ນຖານເນື້ອໃນມາດຖານເງື່ອນໄຂ ທີ່ພາກສ່ວນກ່ຽວຂ້ອງຂອງລັດຖະບານ ໄດ້ກຳນົດອອກ;

4). ກ່ຽວກັບການສະເໜີຂອງກະຊວງການເງິນ ທີ່ໃຫ້ມີການແຕ່ງຕັ້ງຄະນະຮັບຜິດຊອບວຽກດັ່ງກ່າວນີ້, ເນື່ອງຈາກວຽກງານດັ່ງກ່າວ ໄດ້ກຳນົດພາລະບົດບາດ, ສິດໜ້າທີ່ຂອງແຕ່ລະຂະແໜງການທີ່ຈະແຈ້ງແລ້ວ. ສະນັ້ນ, ໃນໄລຍະທົດລອງ ບໍ່ມີຄວາມຈຳເປັນ ແຕ່ງຕັ້ງຄະນະສະເພາະກິດຕື່ມອີກ;

5). ໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງຮັບໂຮມເອົາເນື້ອໃນຄົ້ນຄວ້າຂອງແຕ່ລະຂະແໜງການ, ອີງການ ຕາມແຈ້ງການສະບັບນີ້ ມາຜ່ານກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 16-17 ກັນຍາ 2021 ເພື່ອພິຈາລະນາຕົກລົງ. ຈາກນັ້ນ, ຈຶ່ງມອບໃຫ້ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ຕາງໜ້າລັດຖະບານ ເຊັນສັນຍາອະນຸມັດ ພາຍໃນເດືອນກັນຍາ 2021"

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມ ເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ທ່ານນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ | 01 ສະບັບ |
| 2. | ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. | ຫ້ອງວ່າການສຳນັກງານປະທານປະເທດ | 01 ສະບັບ |
| 4. | ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. | ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. | ເກັບມ້ຽນສຳເນົາ | 01 ສະບັບ |